ສຸຂະພາບທາງເພດ-ສຸຂະພາບຈະເລີນພັນ ແລະ ສິດທິຂອງແມ່ຍິງ-ໄວໜຸ່ມຍິງ

ອັດຕາການປົກຄຸມການນຳໃຊ້ການຄຸມກຳເນີດແບບທັນສະໄໝ ແລະ ການເກີດ ແຕ່ປີ 2017 ຫາ 2021

ການວາງແຜນຄອບຄົວແບບທັນສະໄໝມີທ່າອ່ຽງເພີ່ມຂຶ້ນ ກ່ອນຈະມີຄື້ນການແຜ່ລະບາດຂອງພະຍາດໂຄວິດ-19.

ມາດຕະການປິດເມືອງ (lockdown) ຈຳກັດການເດີນທາງເພື່ອເຂົ້າເຖິງການບໍລິການ. ການບໍລິການທາງໂທລະສັບ ແລະ ການປຸກລະດົມໂຄສະນາ ຊ່ວຍເພີ່ມການເຂົ້າເຖິງການບໍລິການວາງແຜນຄອບຄົວໃນປີ 2021. ການວາງແຜນຄອບຄົວຫຼຸດລົງ, ເຊິ່ງສອດຄ່ອງກັບການເພີ່ມຂຶ້ນຂອງຈຳນວນການເກີດ.



ການປ່ຽນແປງວິທີການຄຸມກຳເນີດ

ວິທີການຄຸມກຳເນີດແບບຖາວອນແມ່ນເປັນທີ່ນິຍົມຫຼາຍຂຶ້ນ.



ອັດຕາລູກຕາຍໃນທ້ອງ ແຕ່ປີ 2017 ຫາ 2021

ການເພີ່ມຂຶ້ນຂອງການເກີດ ສົ່ງຜົນໃຫ້ອັດຕາລູກຕາຍໃນທ້ອງເພີ່ມຂຶ້ນ.



ການນຳໃຊ້ການຄຸມກຳເນີດ ແລະ ອາການສົນຈາກການລຸລູກທີ່ບໍ່ປອດໄພ

ໃນປີ 2020 ແລະ ປີ 2021, ການໃຊ້ຢາຄຸມກຳເນີດຫຼຸດລົງ. ສິ່ງນີ້ສົ່ງຜົນໃຫ້ອັດຕາການລຸລູກທີ່ບໍ່ປອດໄພເພີ່ມຂຶ້ນຢ່າງຫຼວງຫຼາຍ. ເນື່ອງຈາກການເຂົ້າເຖິງຢາຄຸມກຳເນີດມີຈຳກັດ, ເຮັດໃຫ້ການຖືພາໂດຍບໍ່ໄດ້ຕັ້ງໃຈເພີ່ມຂຶ້ນ.

ເຫັນໄດ້ວ່າເຫດການດັ່ງກ່າວມີສາຍພົວພັນລະຫວ່າງການຄຸມກຳເນີດ ແລະ ຈຳນວນການລຸລູກທີ່ບໍ່ປອດໄພ.



ການຕາຍຂອງແມ່ ແລະ ຈຳນວນຜະດຸງຄັນທີ່ປະຕິບັດໜ້າທີ່



ຫຼັງຈາກມີການເສີມສ້າງຜະດຸງຄັນທີ່ມີຄວາມຊຳນານງານຫຼາຍຂຶ້ນ, ການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນໃນຊຸມຊົນກໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ. ຜະດຸງຄັນສາມາດໃຫ້ບໍລິການດ້ານການວາງແຜນຄອບຄົວ, ການຝາກທ້ອງ, ການດູແລລະຫວ່າງການເກີດ ແລະ ຫຼັງເກີດຢ່າງປອດໄພ. ສິ່ງເຫຼົ່ານີ້ແມ່ນການບໍລິການທັງໝົດທີ່ພວກເຮົາຮູ້ມາແຕ່ດົນນານແລ້ວວ່າສາມາດຫຼຸດຜ່ອນການເສຍຊີວິດຂອງແມ່ໄດ້.

United Nations Population Fund Lao PDR

ປະສິດທິຜົນຂອງການບໍລິການທາງໂທລະສັບ ທີ່ແຂວງຫຼວງພະບາງ

ການບໍລິການທາງໂທລະສັບ ໄດ້ຖືກທົດລອງໃຊ້ຢູ່ແຂວງຫຼວງພະບາງ ເພື່ອປ້ອງກັນບໍ່ໃຫ້ການບໍລິການສຸຂະພາບທີ່ຈຳເປັນຕ້ອງຢຸດຊະງັກ ເຊັ່ນ: ສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ສຸຂະພາບແມ່ ແລະ ເດັກຫຼັງເກີດ, ເດັກ ແລະ ເຍົາວະຊົນ (SRMNCAH). ການຕິດຕາມແມ່ຍິງຖືພາຢ່າງເປັນປົກກະຕິ ແລະ ທັນເວລາໂດຍບຸກຄະລາກອນການແພດ ໄດ້ປະກອບສ່ວນຫຼຸດຜ່ອນການຕາຍຂອງແມ່ໃນແຂວງຫຼວງພະບາງ.

ການຂໍຄຳປຶກສາແບບໜ້າຕໍ່ໜ້າ ແມ່ນມີອັດຕາຄົງທີ່ທຽບໃສ່ປີຜ່ານມາ. ທີ່ເມືອງຫຼວງພະບາງ, ການບໍລິການທາງໂທລະສັບ ເຮັດໃຫ້ອັດຕາການຂໍຄຳປຶກສາ ເພີ່ມຂຶ້ນ 72% ໃນປີ 2021





ຂໍ້ສະເໜີແນະ

1. ລົງທຶນໃນການບໍລິການວາງແຜນຄອບຄົວ, ເພື່ອໃຫ້ທຸກໆການເກີດລູກ ມີການວາງແຜນໄວ້ກ່ອນ ແລະ ຫຼີກລ່ຽງການຖືພາແບບບໍ່ໄດ້ຕັ້ງໃຈ.
2. ເພີ່ມທະວີຄວາມພະຍາຍາມ ໃນການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ເພື່ອຫຼຸດຜ່ອນຜົນກະທົບຈາກພະຍາດໂຄວິດ-19.
3. ສະໜັບສະໜູນການຝຶກອົບຮົມ ແລະ ການນຳໃຊ້ຜະດຸງຄັນ ເພື່ອສະໜອງບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ທີ່ມີຄຸນນະພາບ ໃຫ້ແກ່ແມ່ຍິງ ແລະ ໄວໜຸ່ມຍິງ ເພື່ອຫຼຸດຜ່ອນການເຈັບເປັນ ແລະ ການຕາຍຂອງແມ່.
4. ເຊື່ອມສານການນຳໃຊ້ການບໍລິການທາງໂທລະສັບ ເພື່ອເພີ່ມການເຂົ້າເຖິງການບໍລິການສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ ແລະ ເພື່ອຫຼຸດຜ່ອນອັດຕາການຕາຍຂອງແມ່ໃນທີ່ສຸດ.

ສິດທິທາງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນແມ່ນສິດທິມະນຸດ

ສິດທິດ້ານສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ

- ກົດໝາຍວ່າດ້ວຍການດູແລສຸຂະພາບ 2014 (ສະບັບປັບປຸງ)
- ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ 2020
- ນະ�โยบายแห่งชาด ສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2019-2030
- ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2021-2025: ຈຸດສຸມຍຸດທະສາດທີ 1: ສຸຂະພາບຈະເລີນພັນ

ສິດທິໃນການມີຊີວິດ: ການຖືພາ, ການເກີດລູກ ແລະ ການເອົາລູກອອກທີ່ປອດໄພ

- ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2021-2025: ຈຸດສຸມ ຍຸດທະສາດທີ 2: ການເກີດລູກທີ່ປອດໄພ
- ຄູ່ມືກ່ຽວກັບການເອົາລູລູກທີ່ປອດໄພ

ສິດທິໃນການຕັດສິນໃຈໃນ ຈຳນວນ ແລະ ໄລຍະຫ່າງ ການເກີດລູກ ແລະ ສິດໃນ ການເຂົ້າເຖິງວິທີຄຸມກຳເນີດ ທີ່ຫຼາກຫຼາຍ

- ນະ�โยบายแห่งชาด ສຳລັບການບໍລິການ ແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2019-2030
- ກົດໝາຍວ່າດ້ວຍການອະນາໄມ ແລະ ສົ່ງເສີມສຸຂະພາບ 2020
- ກົດໝາຍວ່າດ້ວຍຄອບຄົວ 1995
- ລັດຖະທຳມະນູນ (ສະບັບປັບປຸງ 2015)

ສິດທິດ້ານການສຶກສາ

- ກົດໝາຍວ່າດ້ວຍການສຶກສາແຫ່ງຊາດ ສະບັບປັບປຸງ 2015 (ມາດຕາ 12)
- ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ (2007)

ສິດທິຄວາມເປັນສ່ວນຕົວ: ອິດສະລະພາບທາງຮ່າງກາຍ ແລະ ການຕັດສິນໃຈກ່ຽວກັບ ບັນຫາສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ

- ກົດໝາຍວ່າດ້ວຍການດູແລສຸຂະພາບ 2014 (ສະບັບປັບປຸງ)
- ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສຳລັບການບໍລິການແບບເຊື່ອມສານສຸຂະພາບ ຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2021-2025
- ລັດຖະທຳມະນູນ ມາດຕາທີ 42 (ສະບັບປັບປຸງ 2015)

ສິດທິຕໍ່ຄວາມສະເໝີພາບ ແລະ ການບໍ່ຈຳແນກ

- ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ 2019
- ກົດໝາຍວ່າດ້ວຍສຸຂະພາບ 2014 (ສະບັບປັບປຸງ)
- ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສຳລັບການບໍລິການແບບເຊື່ອມສານສຸຂະພາບ ຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ 2021-2025
- ລັດຖະທຳມະນູນ ມາດຕາທີ 35, 37 (ສະບັບປັບປຸງ)
- ກົດໝາຍວ່າດ້ວຍຄົນພິການ 2019

ສິດທິໃນການຍິນຍອມແຕ່ງງານ ແລະ ຄວາມສະເໝີພາບໃນການ ແຕ່ງງານ

- ກົດໝາຍວ່າດ້ວຍຄອບຄົວ 1995 (ມາດຕາ 3, 9)
- ກົດໝາຍວ່າດ້ວຍຄວາມສະເໝີພາບ ຍິງ-ຊາຍ 2019

ສິດທິຕໍ່ການບໍ່ຖືກກະທຳທີ່ເປັນ ອັນຕະລາຍຕໍ່ແມ່ຍິງ ແລະ ໄວໜຸ່ມຍິງ

- ປະມວນກົດໝາຍອາຍາ: ມາດຕາທີ 168, 170, 171, ແລະ 267
- ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນ ການ ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ 2014
- ກົດໝາຍວ່າດ້ວຍ ການພັດທະນາ ແລະ ປົກປ້ອງແມ່ ຍິງ 2004
- ກົດໝາຍວ່າດ້ວຍຊາວໜຸ່ມລາວ 2020